

## ຜູ້ເບິ່ງແຍງດູແລ ແລະ ອົງການເວົ້າແນວໃດແດ່ ກ່ຽວກັບການບໍລິການຜູ້ໃຫຍ່ໃນເວລາກາງເວັນ (Adult Day Services)?

*"ທ່ານງ່າຍທີ່ສຸດທີ່ຈະເຮັດວຽກນຳ! ຂອບໃຈຫລາຍໆສຳລັບທຸກໆຢ່າງທີ່ທ່ານເຮັດໃຫ້!"*

*"ພະນັກງານດີຫລາຍ ແລະ ເປັນຫ່ວງໄຍນຳ."*

*"ຊ່ວຍໄດ້ຫລາຍ ແລະ ດີນຳທາງໂທຣະສັບ. ຄອບຄົວ ແລະ ລູກຄ້າຍົກຍ້ອງພະນັກງານຢ່າງສູງ."*

*"ເຂົາເຈົ້າເຮັດນຳລູກຄ້າ ແລະ ຄອບຄົວດ້ວຍຄວາມນັບຖືຕະລອດເວລາ."*

*"ນາງມັກຫລາຍໃນກິຈກັມທີ່ຖືກເອົາໃຫ້."*

*"ກິຈກັມແມ່ນດີທີ່ສຸດ. ຂ້ອຍມັກຫ້ອງຮຽນການວາດພາບ."*

*"ປາດຖະນາຢາກມາເຂົ້າທຸກໆມື້!"*

*"ຂ້ອຍຄິດວ່າອັນນີ້ແມ່ນແຫລ່ງຊ່ວຍເຫລືອທີ່ມີຄຸນຄ່າສຳລັບລູກຄ້າຂອງພວກເຮົາ! ຂໍຂອບໃຈຫລາຍໆ!"*

*"ອັນທີ່ຈິງແລ້ວ, ໂດຍປາສຈາກໂຄງການອັນນີ້, ຂ້ອຍເຊື່ອວ່າມັນຈະບໍ່ເປັນໄປໄດ້ທີ່ວ່າສ່ວນນຶ່ງຂອງລູກຄ້າຂອງຂ້ອຍຈະຍັງຢູ່ໃນເຮືອນຂອງ ເຂົາເຈົ້າຢູ່ຕໍ່ໄປ. ພ້ອມທັງ, ສ່ວນນຶ່ງຂອງຜູ້ເບິ່ງແຍງດູແລຈະບໍ່ສາມາດທີ່ຈະເອົາການບໍລິການ **CG** ໃຫ້."*

*"ແລະ ເຂົາເຈົ້າຫົວເລາະນຳນາງ. ສຳຄັນຫລາຍທີ່ສຸດ. ເຂົາເຈົ້າສາມາດເຮັດໃຫ້ນາງຮູ້ສຶກອົບອຸ່ນໃຈເມື່ອເວລາເວົ້າລົມນຳເຂົາເຈົ້າ."*

*"ເຂົາເຈົ້າດີຫລາຍເມື່ອເວລາຂ້ອຍຢາກຈະເວົ້າລົມນຳພະນັກງານກ່ຽວກັບບັນຫາທີ່ແມ່ຂອງຂ້ອຍກຳລັງມີຢູ່. ເຂົາເຈົ້າເອົາໃຈໃສ່ຕໍ່ຄວາມຕ້ອງການຂອງນາງ."*

ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບການບໍລິການ Adult Day Services ກະຣຸນາຕິດຕໍ່ຫາຫ້ອງການ Home and Community Services ທ້ອງຖິ່ນຂອງທ່ານຫລືແວ່ເຂົ້າຢ້ຽມແວບໄຊທ໌ຂອງ Adult Day Services ໄດ້ທີ່: www.dshs.wa.gov/adultdayservices

*ການບໍລິການ **Adult Day Services** ແມ່ນໂຄງການກາງເວັນທີ່ຖືກຄວບຄຸມເບິ່ງນຳ.*

*ໂຄງການສາມາດເປັນບໍ່ວ່າຈະແມ່ນໂຄງການ **Adult Day Care (ADC)** ຫລືໂຄງການ **Adult Day Health (ADH).***

Washington State Department of Social & Health Services

*Transforming lives*

DSHS 22-1731 LA (8/17) Laotian

# ໂຄງການ **Adult Day Services**



ພະແນກບໍລິຫານຄົນແກ່ຊາຣາ ແລະ ການອູ້ມຊູຣະຍະຍາວ
(Aging and Long-Term Support Administration)

## ໂຄງການ **Adult Day Care (ADC)**

ໂຄງການ ADC ໃຫ້ການບໍລິການຈຸດສຳຄັນສຳລັບຜູ້ໃຫຍ່ທີ່ມີສະພາບພະຍາບານ ຫລື ເສັຽອົງຄະຜູ້ທີ່ບໍ່ຕ້ອງມີການເຂົ້າແຊກແຊງນຳ ຫລື ການບໍລິການຂອງນາຍພະຍາບານຜ່ານການສອບເສັງມາແລ້ວ ຫລື ຫມໍບຳບັດການຝຶກຫັດທີ່ມີໃບອະນຸຍາດ.

- ການບໍລິການເບິ່ງແຍງດູແລສ່ວນຕົວ
- ການບໍລິການສັງຄົມອີງຕາມພື້ນຖານການປຶກສາ
- ການຕິດຕາມເບິ່ງນຳສຸຂະພາບເປັນປະຈຳໂດຍ RN
- ກິຈກັມການຮັກສາໂຣກທົ່ວໄປ
- ການສຶກສາກ່ຽວກັບສຸຂະພາບທົ່ວໄປ
- ການຄວບຄຸມເບິ່ງນຳ ແລະ ການປ້ອງການ
- ການຊ່ວຍເຫລືອນຳການຂົນສົ່ງໄປມາ
- ການປະຖົມພະຍາບານ
- ກິຈກັມການພັກຜ່ອນ/ສັງຄົມ
- ຄາບເຂົ້າທີ່ມີພະລານາມັຍ ແລະ ຂອງກິນຫລິ້ນ
- ລູດຊົ່ວໂມງ CARE ລົງໂດຍ 30 ນາທີສຳລັບທຸກໆຊົ່ວໂມງຂອງການມາເຮັດວຽກ, ສູງເຖິງສອງຊົ່ວໂມງຕໍ່ມື້





## ແມ່ນໃຜມີເງື່ອນໄຂໄດ້ຮັບ **ADC** ແດ່? ຄົນໃດຄົນນຶ່ງຜູ້ທີ່:

- ມີການຕີຣາຄາປະເມີນຜົນປັດຈຸບັນຢູ່ໃນ CARE
- ຖືກຈົດຊື່ເຂົ້າຢູ່ໃນໂຄງການ COPES, RCL, new Freedom, ຫລື ການອອກເງິນທຶນທີ່ຖືກອະນຸມັດໃຫ້ອື່ນໆ, ແລະ
- ມີຄວາມຕ້ອງການທີ່ຍັງບໍ່ທັນຖືກຕອບສະນອງເທື່ອສຳລັບການບໍລິການຈຸດສຳຄັນສິ່ງຕໍ່ລົງໄປນີ້ແນວນຶ່ງ ຫລື ຫລາຍແນວ:
  - ການບໍລິການເບິ່ງແຍງດູແລສ່ວນຕົວ
  - ການຄວບຄຸມເບິ່ງນຳສຸຂະພາບພ້ອມທັງການປຶກສາຈາກRN
  - ກິຈກັມການຮັກສາໂຣກທົ່ວໄປ
  - ການຄວບຄຸມເບິ່ງນຳ ແລະ/ຫລື ການປ້ອງການ
  - ອາສັຍຢູ່ໃນສະພາບແວດລ້ອມແບບຢູ່ໃນເຮືອນ

## ໂຄງການ **Adult Day Health (ADH)**

ADH ໃຫ້ການເບິ່ງແຍງຜູ້ເຖົ້າທີ່ຊຳນານ ແລະ/ຫລື ການຮັກສາໂຣກໃຫ້ດີຄືນຄືເກົ່າເພີ້ມເຕີມໃສ່ການບໍລິການຈຸດສຳຄັນທີ່ໄດ້ຖືກສະເນີໃຫ້ຢູ່ນຳ ADC.

- ການບໍລິການຈຸດສຳຄັນທຸກໆຢ່າງຢູ່ພາຍໃນ ADC

ແລະ

- ການເບິ່ງແຍງຜູ້ເຖົ້າທີ່ຊຳນານ
- ການຮັກສາໂຣກທີ່ຊຳນານ:ການຮັກສາໂຣກທາງດ້ານຮ່າງກາຍ ຫລື ວິຊາຊີບ, ການຮັກສາໂຣກປົວແປງ ຫລື ໃຫ້ດີຄືນຄືເກົ່າ, ການສຶກສາພະຍາດການປາກເວົ້າ-ພາສາ, ແລະ ການວັດແທກການຟັງສຽງ
- ການປຶກສາອູ້ມຊູ, ການຄວບຄຸມເບິ່ງນຳເອກສານ
- ການຂົນສົ່ງໄປມາໄດ້ຖືກລວມຢູ່ໃນອັດຕຣາປະຈຳວັນ
- ບໍ່ມີການດັດແປງໃນຊົ່ວໂມງຂອງ CARE

## ແມ່ນໃຜມີເງື່ອນໄຂໄດ້ຮັບ **ADH** ແດ່? ຄົນໃດຄົນນຶ່ງຜູທີ່:

- ມີການຕີຣາຄາປະເມີນຜົນປັດຈຸບັນຢູ່ໃນ CARE
- ຖືກຈົດຊື່ເຂົ້າຢູ່ໃນໂຄງການ COPES, RCL, new Freedom, ຫລື ການອອກເງິນທຶນທີ່ຖືກອະນຸມັດໃຫ້ອື່ນໆ
- ມີຄວາມຕ້ອງການທີ່ຍັງບໍ່ທັນຖືກຕອບສະນອງເທື່ອສຳລັບສິ່ງຕໍ່ລົງໄປນີ້ແນວນຶ່ງ ຫລື ຫລາຍແນວ:
  - ການເບິ່ງແຍງຜູ້ເຖົ້າທີ່ຊຳນານ
  - ການຮັກສາໂຣກທີ່ຊຳນານ
  - ການປຶກສາ
- ອາສັຍຢູ່ໃນສະພາບແວດລ້ອມແບບຢູ່ໃນເຮືອນ, ສະຖາບັນການອາສັຍຢູ່ທີ່ຖືກຊ່ວຍເຫລືອນຳ ຫລື ເຮືອນຄອບຄົບຜູ້ໃຫຍ່ທີ່ບໍ່ມີການບໍລິການທີ່ຕ້ອງການໄວ້ໃຫ້